ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ເລກທີ...607../ຖວທ
ນະຄອນຫຼວງວຽງຈັນ, ວັນທີ.03..ພຈ.11.2021

# ບົດແນະນຳ
# ກ່ຽວກັບການຈັດຕັ້ງປະຕິບັດ
# ດຳລັດວ່າດ້ວຍການສ້າງ ຄອບຄົວ ແລະ ບ້ານ ວັດທະນະທຳ

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 95/ນຍ, ລົງວັນທີ 09 ມີນາ 2017
- ອີງຕາມ ດຳລັດ ວ່າດ້ວຍການສ້າງຄອບຄົວ ແລະ ບ້ານ ວັດທະນະທຳ ສະບັບເລກທີ 123/ລບ, ລົງວັນທີ 16/02/2021.

ເພື່ອຈັດຕັ້ງຜັນຂະຫຍາຍ ມາດຕະຖານຄອບຄົວ ແລະ ບ້ານ ວັດທະນະທຳ ໃຫ້ມີຄວາມຮັບຮູ້ ແລະ ເຂົ້າໃຈ ການຈັດຕັ້ງປະຕິບັດເປັນເອກະພາບ ໃນທົ່ວປະເທດ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນນາມເປັນເສນາທິການໃຫ້ແກ່ ລັດຖະບານ ແລະ ເປັນອົງການປະສານງານກັບ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ, ລັດຖະມົນຕີ ຈຶ່ງອອກບົດແນະນຳ ດັ່ງນີ້:

## I. ຈຸດປະສົງ, ຄາດໝາຍ:

**1.** ເພື່ອເຮັດໃຫ້ບັນດາກະຊວງ-ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ມີຄວາມຮັບຮູ້ຖືກຕ້ອງ ແລະ ຜັນຂະຫຍາຍເປັນແຜນຍຸດທະສາດ (2030), ແຜນ 5 ປີ (2025-2030) ຂອງຕົນໃຫ້ແທດເໝາະກັບຈຸດພິເສດ ແລະ ລະດັບການພັດທະນາເສດຖະກິດ-ສັງຄົມ ຂອງແຕ່ລະທ້ອງຖິ່ນເປັນຕົ້ນ ເມືອງ, ບ້ານ ແລະ ຄອບຄົວ;

**2.** ໃຫ້ໃຫ້ບັນດາກະຊວງ-ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ເປັນເອກະພາບກັນໃນການຈັດຕັ້ງປະຕິບັດກ່ຽວກັບວິທີ ຂັ້ນຕອນ ການປະເມີນມາດຕະຖານຕົວຊີ້ວັດ ແລະ ຄາດໝາຍຕາມຄວາມຮັບຜິດຊອບອົງການປົກຄອງທ້ອງຖິ່ນຂອງຕົນ ໃຫ້ສອດຄ່ອງກັບເນື້ອໃນຈິດໃຈຂອງດຳລັດ 123/ລບ, ລົງວັນທີ 16/02/2021;

**3.** ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດການປະເມີນ ໃຫ້ແກ່ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ນະຄອນຫຼວງ, ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ, ນະຄອນ, ເທດສະບານ ໃນທົ່ວປະເທດ.

**II. ແນະນຳວິທີການຈັດຕັ້ງປະຕິບັດ ແລະ ອະທິບາຍເພີ່ມເຕີມບາງຕົວຊີ້ວັດ ຂອງມາດຕະຖານການສ້າງ ຄອບຄົວ ແລະ ບ້ານ ວັດທະນະທຳ**

ການກຳນົດມາດຕະຖານ ແລະ ຕົວຊີ້ວັດການສ້າງຄອບຄົວ ແລະ ບ້ານ ວັດທະນະທຳ ໃນດຳລັດເລກທີ 123/ລບ, ລົງວັນທີ 16/02/2021 ແນໃສ່ເຮັດໃຫ້ບັນດາຄອບຄົວ ແລະ ບ້ານ ວັດທະນະທຳ ໃນທົ່ວປະເທດ ມີພື້ນຖານທີ່ເຂັ້ມແຂງແໜ້ນແກ່ນ ຮັບປະກັນຄຸນນະພາບຊີວິດຂອງສະມາຊິກຄອບຄົວ, ສ້າງໃຫ້ຄອບຄົວກາຍເປັນຫົວໜ່ວຍຕົ້ນຕໍຂອງກຳລັງການຜະລິດ ແລະ ການພັດທະນາສັງຄົມທີ່ມີຄຸນນະພາບ, ເຮັດໃຫ້ບ້ານກາຍເປັນຮາກຖານການເມືອງທີ່ໜັກແໜ້ນເຂັ້ມແຂງຂອງພັກ ຢ່າງແທ້ຈິງ.

**1. ອະທິບາຍເພີ່ມເຕີມບາງຕົວຊີ້ວັດ ຂອງມາດຕະຖານການສ້າງ ຄອບຄົວ ແລະ ບ້ານ ວັດທະນະທຳ**

- **ຜູ້ທີ່ມີອາຍຸອອກແຮງງານ ມີວຽກເຮັດງານທຳ ແລະ ມີລາຍໄດ້ໝັ້ນຄົງ** ໝາຍເຖິງ ຜູ້ທີ່ມີອາຍຸ 18 ປີຂຶ້ນໄປຕ້ອງຮູ້ທຳມາຫາກິນ ແລະ ຮູ້ສ້າງລາຍໄດ້ກຸ້ມຕົນເອງ ບໍ່ວ່າຈະເປັນອາຊີບ ພະນັກງານ, ການເຮັດໄຮ່ ເຮັດນາ, ປູກຝັງ, ລ້ຽງສັດ, ຕໍ່າຫູກທໍໄໝ ແລະ ອື່ນໆ ທີ່ສາມາດສ້າງໄດ້ໃຫ້ຕົນເອງ ແລະ ຄອບຄົວ.
- **ລາຍຮັບສະເລ່ຍຕໍ່ຫົວຄົນ ສູງກວ່າລາຍຮັບສະເລ່ຍຕໍ່ຫົວຄົນຂອງ ເມືອງ ,ເທດສະບານ, ນະຄອນ ທີ່ຕົນຂຶ້ນກັບ** ໝາຍເຖິງບ້ານດັ່ງກ່າວຕ້ອງມີລາຍຮັບສະເລ່ຍຕໍ່ຫົວຄົນ ສູງກວ່າລາຍຮັບສະເລ່ຍຕໍ່ຫົວຄົນທີ່ເມືອງ, ເທດສະບານ, ນະຄອນ ກຳນົດໄວ້ ( ມອບໃຫ້ອົງການປົກຄອງທ້ອງຖິ່ນເປັນຜູ້ກຳນົດຕົວຊີ້ບອກເພື່ອແທດເໝາະກັບຕົວຈິງ).
- **ອັດຕາສ່ວນຄອບຄົວວັດທະນະທຳ ຂອງບ້ານວັດທະນະທຳ** ໝາຍເຖິງບ້ານຕ້ອງມີຄອບຄົວວັດທະນະທຳທີ່ບັນລຸມາດຕະຖານ ທີ່ກຳນົດໄວ້ໃນດຳລັດເລກທີ 123/ລບ, ລົງວັນທີ 16/2/2021 ສອດຄ່ອງກັບບົດແນະນຳສະບັບນີ້ ເຊັ່ນ: ຄອບຄົວວັດທະນະທຳຢູ່ຕົວເມືອງ ຕ້ອງບັນລຸ ແປດສິບຫ້າສ່ວນຮ້ອຍ ຂຶ້ນໄປ ຂອງມາດຕະຖານ; ຄອບຄົວວັດທະນະທຳຢູ່ເຂດຊົນນະບົດ (ທົ່ງພຽງ) ຕ້ອງບັນລຸ ແປດສິບສ່ວນຮ້ອຍ ຂຶ້ນໄປ ຂອງມາດຕະຖານ; ຄອບຄົວວັດທະນະທຳຢູ່ເຂດຊົນນະບົດ (ພູດອຍ) ຕ້ອງບັນລຸ ເຈັດສິບຫ້າສ່ວນຮ້ອຍ ຂຶ້ນໄປ ຂອງມາດຕະຖານ.
- **ອັດຕາສ່ວນຄອບຄົວທຸກຍາກ ຂອງບ້ານວັດທະນະທຳ ຕ່ຳກວ່າອັດຕາສະເລ່ຍຄອບຄົວທຸກຍາກຂອງເມືອງ, ເທດສະບານ, ນະຄອນ ທີ່ຕົນຂຶ້ນກັບ** ໝາຍເຖິງບ້ານດັ່ງກ່າວຕ້ອງມີອັດຕາສ່ວນຄອບຄົວທຸກຍາກ ມີໜ້ອຍກວ່າຄອບຄົວທຸກຍາກ ຂອງເມືອງ, ເທດສະບານ, ນະຄອນ.
- **ປະເມີນມາດຕະຖານຄອບຄົວ ແລະ ບ້ານ ວັດທະນະທຳ** ໝາຍເຖິງການປະເມີນຄອບຄົວ ແລະ ບ້ານເປົ້າໝາຍທີ່ຈະສ້າງເປັນຄອບຄົວ ແລະ ບ້ານວັດທະນະທຳໃໝ່.
- **ປະເມີນຜົນຄອບຄົວ ແລະ ບ້ານ ວັດທະນະທຳ** ໝາຍເຖິງການປະເມີນຜົນຄືນຄອບຄົວ ແລະ ບ້ານວັດທະນະທຳ ທີ່ໄດ້ຮັບໃບຢັ້ງຢືນຄອບຄົວ ແລະ ບ້ານ ວັດທະນະທຳແລ້ວ ຕ້ອງປະເມີນຄືນໃນແຕ່ລະປີ ຖ້າຄົບສາມປີຕໍ່ເນື່ອງໄດ້ຮັບການຍ້ອງຍໍ.
- **ນ້ຳໃຊ້ທີ່ສະອາດ** ໝາຍເຖິງໄດ້ນຳໃຊ້ນ້ຳປະປາ, ນ້ຳບາດານ, ນ້ຳສ້າງ, ນ້ຳລິນ.
- **ປະຕິບັດສິດສະເໝີພາບບົດບາດຍິງ-ຊາຍ** ໝາຍເຖິງເປັນຄອບຄົວແບບຢ່າງໃນການປະຕິບັດບົດບາດຍິງ-ຊາຍ, ປາສະຈາກການໃຊ້ຄວາມຮຸນແຮງໃນຄອບຄົວໂດຍສະເພາະແມ່ຍິງ-ເດັກນ້ອຍ.

**2.** ການສ້າງຄອບຄົວວັດທະນະທຳ ຕ້ອງປະເມີນຕາມແບບຟອມ ດັ່ງລຸ່ມນີ້:

**ແບບຟອມທີ 1**

# ແບບຟອມປະເມີນມາດຕະຖານຄອບຄົວວັດທະນະທຳ

## ກ. ຂໍ້ມູນທົ່ວໄປ

1. ຊື່ ແລະ ນາມສະກຸນ ຜູ້ສະໜອງຂໍ້ມູນ: ..........................................ອາຍຸ...............ປີ
   ອາຊີບ:..................................................,ສາສະໜາ.....................................
2. ຊື່ບ້ານ:....................................,ເມືອງ.....................,ແຂວງ..............................
3. ຈຳນວນຄົນໃນຄົວເຮືອນ: ..................... ຄົນ, ຍິງ: ....................ຄົນ.
4. ສະຖານະພາບ ☐ ແຕ່ງງານ ☐ ຮ້າງ ☐ ໝ້າຍ ☐ ໂສດ
5. ລະດັບການສຶກສາສູງສຸດຂອງຫົວໜ້າຄອບຄົວຈົບຊັ້ນໃດ?.
   ☐ບໍ່ມີຊັ້ນ ☐ ປໍ 1- ປໍ 5 ☐ມໍ 1 - ມໍ 4 ☐ມໍ 4 - ມໍ 7 ☐ຊັ້ນຕົ້ນ ☐ຊັ້ນກາງ
   ☐ຊັ້ນສູງ ☐ປະລິນຍາຕີ ☐ປະລິນຍາໂທ ☐ປະລິນຍາເອກ ☐ອື່ນໆ.........................

## ຂ. ມາດຕະຖານ, ຕົວຊີ້ວັດ ແລະ ການໃຫ້ຄະແນນ

| ມາດຕະຖານ | ຕົວຊີ້ວັດ | ຄະແນນ | ຄະແນນຕົວຈິງ |
|---|---|---|---|
| 1. ມາດຕະຖານ ເຄົາລົບ ແລະ ປະຕິບັດກົດໝາຍ, ເຂົ້າຮ່ວມຂະບວນການພາຍໃນບ້ານ<br><br>ປະກອບດ້ວຍ 10 ຕົວຊີ້ວັດ ຄະແນນເຕັມ 43 ຄະແນນ ຄະແນນຕົວຈິງ.......ຄະແນນ | ປະຕິບັດ ແນວທາງ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ຊຶ່ງສະມາຊິກຄອບຄົວບໍ່ຖືກລົງວິໄນ ຢູ່ສະຖານທີ່ເຮັດວຽກ, ສະຖານການສຶກສາ ແລະ ຢູ່ພາຍໃນບ້ານ ຫຼື ຖືກລົງໂທດ ຕາມກົດໝາຍ | 5 | |
| | ຕິດທຸງຊາດໃນວັນສຳຄັນ ຂອງພັກ ແລະ ຂອງຊາດ | 4 | |
| | ເຂົ້າຮ່ວມໃນການເຄື່ອນໄຫວກິດຈະກຳທາງດ້ານສິລະປະວັດທະນະທຳ ຢູ່ພາຍໃນບ້ານ ແລະ ກິລາ-ກາຍຍະກຳ ຢ່າງຖືກຕ້ອງ, ສອດຄ່ອງ ແລະ ເປັນປົກກະຕິ | 3 | |
| | ປະຕິບັດຕາມແບບແຜນດຳລົງຊີວິດທີ່ສີວິໄລ, ກ້າວໜ້າ ເປັນຕົ້ນ ການແຕ່ງດອງ, ການສົ່ງສະການ, ບຸນປະເພນີ ຕາມລະບຽບການທີ່ກ່ຽວຂ້ອງ | 5 | |
| | ເຂົ້າຮ່ວມການປົກປັກຮັກສາ ປູສະນີຍະສະຖານ, ຮອງຮອຍປະຫວັດສາດ ,ທຳມະຊາດ ,ທັດສະນີຍະພາບ ຂອງທ້ອງຖິ່ນ | 4 | |
| | ປົກປັກຮັກສາສິ່ງແວດລ້ອມ ເປັນຕົ້ນ ການເກັບມ້ຽນ, ການຖິ້ມຂີ້ເຫຍື້ອ ແລະ ສິ່ງເສດເຫຼືອຕ່າງໆ ຕາມລະບຽບການທີ່ກ່ຽວຂ້ອງ | 5 | |
| | ເຂົ້າຮ່ວມການເຄື່ອນໄຫວວຽກງານ ເພື່ອສົ່ງເສີມທາງດ້ານວັດທະນະທຳ-ສັງຄົມ ເປັນຕົ້ນ ການບໍລິຈາກ, ການສົ່ງເສີມບົດບາດຍິງ-ຊາຍ ,ການຕອບແທນບຸນຄຸນ, ການສົ່ງເສີມການສຶກສາ ແລະ ພອນສະຫວັນ | 4 | |
| | ປະຕິບັດຕາມລະບຽບການ ກ່ຽວກັບສຸຂານາໄມ, ຄວາມປອດໄພທາງດ້ານສະບຽງອາຫານ, ການກັນ ແລະ ຄວບຄຸມພະຍາດ | 4 | |
| | ປະຕິບັດຕາມລະບຽບການກ່ຽວກັບ ການປ້ອງກັນຄວາມສະຫງົບ ແລະ ການປ້ອງກັນອັກຄີໄພ | 4 | |
| | ເຄົາລົບ ແລະ ປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບຄວາມເປັນລະບຽບຮຽບຮ້ອຍ , ຄວາມປອດໄພໃນການສັນຈອນ ເປັນຕົ້ນ ການນຳໃຊ້ພື້ນທີ່ຖະໜົນ ຫຼື ປ່າທາງ ໂດຍບໍ່ໄດ້ຮັບອະນຸຍາດ | 5 | |

| | | | |
|---|---|---|---|
| 2. ມາດຕະຖານ ຄອບຄົວອົບອຸ່ນ ,ກ້າວໜ້າ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ<br><br>ປະກອບດ້ວຍ 07 ຕົວຊີ້ວັດ ຄະແນນເຕັມ 31 ຄະແນນ ຄະແນນຕົວຈິງ.......ຄະແນນ | ເອົາໃຈໃສ່ເບິ່ງແຍງລ້ຽງດູສະມາຊິກໃນຄອບຄົວ ເປັນຕົ້ນ ຜູ້ອາຍຸສູງ, ເດັກນ້ອຍ ,ຄົນພິການ | 5 | |
| | ປະກອບສ່ວນໃນການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນເວລາທີ່ພົບຄວາມຫຍຸ້ງຍາກ ແລະ ເກີດໄພພິບັດ | 4 | |
| | ແຕ່ງດອງຖືກຕ້ອງຕາມຮີດຄອງປະເພນີ, ກົດໝາຍ, ລະບຽບການ, ເປັນຜົວໜຶ່ງເມຍດຽວ, ມີຄວາມ ສະເໝີພາບ ແລະ ຊື່ສັດບໍລິສຸດ | 5 | |
| | ປະຕິບັດສິດສະເໝີພາບ ຍິງ-ຊາຍ, ບໍ່ໃຊ້ຄວາມຮຸນແຮງໃນຄອບຄົວ , ບໍ່ພົວພັນກັບສິ່ງເສບຕິດ, ບໍ່ຫຼິ້ນການພະນັນ, ບໍ່ເຊື່ອຖືງົມງວາຍ, ບໍ່ສ້າງຄວາມຫຍຸ້ງຍາກໃຫ້ແກ່ຄອບຄົວ, ສັງຄົມ ແລະ ອົງການປົກຄອງທ້ອງຖິ່ນ. | 5 | |
| | ເຂົ້າເປັນສະມາຊິກການປະກັນສຸຂະພາບ ແລະ ໄດ້ຮັບການດູແລເບິ່ງແຍງສຸຂະພາບ | 3 | |
| | ຮູ້ອະນຸລັກ, ຮັກສາມູນເຊື້ອວັດທະນະທຳອັນດີງາມ ຂອງຊາດ, ຂອງເຜົ່າ, ມີແບບແຜນການດຳລົງຊີວິດທີ່ສີວິໄລໃນຄອບຄົວ, ບ້ານ ແລະ ສັງຄົມ | 5 | |
| | ປະຕິບັດສິດ ແລະ ພັນທະ ຂອງພົນລະເມືອງລາວ ລວມທັງປະກອບສ່ວນເຂົ້າໃນກິດຈະກຳແລະວຽກງານສາທະລະນະປະໂຫຍດໃນສັງຄົມ | 4 | |
| 3. ມາດຕະຖານ ການຜະລິດ, ດຳເນີນທຸລະກິດ ການສຶກສາຮ່ຳຮຽນ ຫຼື ມີວຽກເຮັດງານທຳ<br><br>ປະກອບດ້ວຍ 06 ຕົວຊີ້ວັດ ຄະແນນເຕັມ 26 ຄະແນນ ຄະແນນຕົວຈິງ.......ຄະແນນ | ມີເຮືອນຢູ່ເປັນຂອງຕົນເອງ | 5 | |
| | ປະກອບອາຊີບທີ່ຖືກຕ້ອງຕາມກົດໝາຍ ,ຮູ້ຈັກຫັນປ່ຽນ ແລະ ພັດທະນາແບບແຜນການດຳລົງຊີວິດ ໄປສູ່ຄວາມກ້າວໜ້າ ແລະ ໝັ້ນຄົງ | 4 | |
| | ມີວຽກເຮັດງານທຳ ທີ່ເໝາະສົມກັບອາຍຸກະສຽນໃນການອອກແຮງງານ | 4 | |
| | ໄດ້ຮັບການສຶກສາ ຮ່ຳຮຽນ ຕາມເກນອາຍຸ | 5 | |
| | ມີໄຟຟ້າ ແລະ ນຳໃຊ້ນ້ຳທີ່ສະອາດ | 4 | |
| | ສາມາດເຂົ້າເຖິງ ຂໍ້ມູນ ຂ່າວສານ ກ່ຽວກັບການພັດທະນາເສດຖະກິດ-ສັງຄົມ ແລະ ວັດທະນະທຳ ດ້ວຍ ການຟັງ, ການເບິ່ງ ແລະ ວິທີການອື່ນ ຕາມຄວາມເໝາະສົມຢ່າງເປັນປົກກະຕິ | 4 | |

ຈຳນວນມາດຕະຖານ ມີ 3 ມາດຕະຖານ

ຈຳນວນຕົວຊີ້ວັດ 23 ຕົວຊີ້ວັດ ຈຳນວນຄະແນນເຕັມລວມທັງໝົດມີ 100 ຄະແນນ ເທົ່າກັບ **100 %**

ວິທີຄິດໄລ່: ຄະແນນຕົວຈິງ X 100 ຫານ 100 ເທົ່າກັບ.......... % ຕົວຢ່າງ :.......... X 100% ເທົ່າກັບ..........%

100

**ຄະນະກຳມະການ**

**1......................................**

**2........................................**

**3............................................**

**ອົງການປົກຄອງບ້ານ**

**1..................................................**

**2.........................................**

**3..........................................**

ຄ. ມາດຕະຖານ ຄອບຄົວວັດທະນະທຳທີ່ຍັງບໍ່ທັນບັນລຸຕົວຊີ້ວັດ ການປັບປຸງໃນປີ..........

| ລ/ດ | ມາດຕະຖານ ກິດຈະກຳທີ່ຈະປັບປຸງ | ຕົວຊີ້ວັດ | ໄລຍະເວລາ (ເດືອນ) | ໝາຍເຫດ |
|---|---|---|---|---|
| 1 | ມາດຕະຖານ<br>ເຄົາລົບ ແລະ ປະຕິບັດ ກົດໝາຍ, ເຂົ້າຮ່ວມ ຂະບວນການ ພາຍໃນບ້ານ<br>ໂດຍມີຕົວຊີ້ວັດ ຄື: | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| 2 | ມາດຕະຖານ<br>ຄອບຄົວອົບອຸ່ນ ,ກ້າວໜ້າ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໂດຍມີຕົວຊີ້ວັດ ຄື | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| 3 | ມາດຕະຖານ<br>ການຜະລິດ, ດຳເນີນທຸລະກິດ, ການສຶກສາ ຮ່ຳຮຽນ ຫຼື ມີວຽກເຮັດງານທຳ<br>ໂດຍມີຕົວຊີ້ວັດ ຄື | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |

**ແບບຟອມທີ 2**

**3.** ການສ້າງບ້ານວັດທະນະທຳ ຕ້ອງປະເມີນຕາມແບບຟອມ ດັ່ງນີ້:

## ແບບຟອມປະເມີນມາດຕະຖານບ້ານວັດທະນະທຳ

### ກ. ຂໍ້ມູນທົ່ວໄປ

1. ຊື່ບ້ານ:......................................,ເມືອງ......................,ແຂວງ..........................
2. ຈຳນວນພົນລະເມືອງ: ...................... ຄົນ, ຍິງ: ....................ຄົນ.
3. ຄອບຄົວທັງໝົດ...........ຄອບຄົວ, ຄອບຄົວວັດທະນະທຳ...........ຄອບຄົວ, ກວມເອົາ......%
4. ວັນ ເດືອນ ປີ ສ້າງຕັ້ງບ້ານ.......................
5. ຈຳນວນແຮງງານຕົ້ນຕໍ..................ຄົນ, ຈຳນວນແຮງງານສຳຮອງ...................ຄົນ

### ຂ. ມາດຕະຖານ, ຕົວຊີ້ວັດ ແລະ ການໃຫ້ຄະແນນ

| ມາດຕະຖານ | ຕົວຊີ້ວັດ | ຄະແນນ | ຄະແນນຕົວຈິງ |
|---|---|---|---|
| **1.** ມາດຕະຖານ ເຄົາລົບ ແລະ ປະຕິບັດ ແນວທາງ ນະໂຍບາຍ, ກົດໝາຍ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ<br><br>ປະກອບດ້ວຍ 05 ຕົວຊີ້ວັດ ຄະແນນເຕັມ 20 ຄະແນນ ຄະແນນຕົວຈິງ.......ຄະແນນ | ໂຄສະນາ ເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ ຢ່າງເປັນປົກກະຕິ ເພື່ອພັດທະນາ ແລະ ສ້າງບ້ານ ໃຫ້ກາຍເປັນບ້ານພົ້ນທຸກ ແລະ ບ້ານພັດທະນາ | 5 | |
| | ສ້າງໜ່ວຍພັກບ້ານ ໃຫ້ກາຍເປັນໜ່ວຍພັກປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ, ສ້າງອົງການຈັດຕັ້ງມະຫາຊົນ ຂອງບ້ານ ໃຫ້ໄດ້ນາມມະຍົດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ | 4 | |
| | ປະຕິບັດສິດປະຊາທິປະໄຕປະຊາຊົນ, ປະຊາຊົນພາຍໃນບ້ານ ມີເງື່ອນໄຂເຂົ້າຮ່ວມຕິດຕາມ, ກວດກາ ການເຄື່ອນໄຫວຂອງອົງການຄຸ້ມຄອງບໍລິຫານລັດ ທີ່ເຄື່ອນໄຫວຢູ່ພາຍໃນບ້ານ | 4 | |
| | ປະຕິບັດມາດຕະຖານ ຄວາມປອດໄພ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ, ປະຕິບັດສິດສະເໝີພາບຍິງ-ຊາຍ ບໍ່ມີການໃຊ້ຄວາມຮຸນແຮງໃນຄອບຄົວ, ບໍ່ມີການພົວພັນກັບສິ່ງເສບຕິດ, ບໍ່ມີການຫຼິ້ນການພະນັນ ແລະ ບໍ່ມີປະກົດການຫຍໍ້ທໍ້ອື່ນ ພາຍໃນບ້ານ | 4 | |
| | ຈັດຕັ້ງປະຕິບັດວຽກງານໄກ່ເກ່ຍຂໍ້ຂັດແຍ່ງພາຍໃນບ້ານໄດ້ດີ. | 3 | |
| **2.** ມາດຕະຖານ ການເຄື່ອນໄຫວຊີວິດວັດທະນະທຳທີ່ອຸດົມສົມບູນ<br><br>ປະກອບດ້ວຍ 09 ຕົວຊີ້ວັດ ຄະແນນເຕັມ 34 ຄະແນນ ຄະແນນຕົວຈິງ.......ຄະແນນ | ມີອັດຕາສ່ວນຄອບຄົວວັດທະນະທຳ ກວມເອົາ ແປດສິບຫ້າສ່ວນຮ້ອຍ ຂຶ້ນໄປ | 5 | |
| | ມີສະໂມສອນວັດທະນະທຳ, ຫ້ອງອ່ານ, ຫ້ອງມູນເຊື້ອ, ຫໍຂ່າວ, ລະບົບໂທລະໂຄ່ງ, ເດີ່ນກິລາ ໂດຍສອດຄ່ອງກັບເງື່ອນໄຂຂອງບ້ານ | 4 | |
| | ມີການຈັດຕັ້ງ ປົກປັກຮັກສາ ,ເສີມຂະຫຍາຍຮູບແບບການເຄື່ອນໄຫວສິລະປະວັດທະນະທຳ, ການພັກຜ່ອນຢ່ອນອາລົມ, ກິລາມວນຊົນ ອັນເປັນມູນເຊື້ອຂອງທ້ອງຖິ່ນ | 3 | |
| | ປົກປັກຮັກສາ ,ປ້ອງກັນຮ່ອງຮອຍປະຫວັດສາດ, ວັດທະນະທຳ ແລະ ທັດສະນີຍະພາບຂອງບ້ານ | 5 | |
| | ມີສະມາຊິກພາຍໃນບ້ານ ຮຽນຈົບປະຖົມສຶກສາ ຂຶ້ນໄປ | 4 | |

| | | | |
|---|---|---|---|
| | ມີອັດຕາສ່ວນເດັກນ້ອຍທີ່ຂາດສານອາຫານຫຼຸດລົງ ແລະ ໄດ້ຮັບວັກຊີນກັນພະຍາດ ຢ່າງຄົບຖ້ວນ ໃນແຕ່ລະປີ | 3 | |
| | ບໍ່ມີການເຊື່ອຖືງົມງວາຍ ແລະ ປະຊາຊົນພາຍໃນບ້ານບໍ່ສ້າງຄວາມຫຍຸ້ງຍາກໃຫ້ແກ່ຄອບຄົວ, ສັງຄົມ ແລະ ອົງການປົກຄອງທ້ອງຖິ່ນ; | 4 | |
| | ສາມາດລະດົມການຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ສົ່ງເສີມການຕອບແທນບຸນຄຸນ | 3 | |
| | ເອົາໃຈໃສ່ ແລະ ດູແລເບິ່ງແຍງ ຜູ້ອາຍຸສູງ, ເດັກນ້ອຍ, ຜູ້ທີ່ມີຜົນງານ, ພິການ ,ຜູ້ທີ່ທຸກຍາກ, ອະນາຖາ ແລະ ຄົນທີ່ຍັງມີສະພາບຫຍຸ້ງຍາກ | 3 | |
| 3. ມາດຕະຖານ ພື້ນຖານເສດຖະກິດທີ່ໝັ້ນຄົງ ແລະ ມີການພັດທະນາ<br><br>ປະກອບດ້ວຍ 05 ຕົວຊີ້ວັດ ຄະແນນເຕັມ 19 ຄະແນນ ຄະແນນຕົວຈິງ.......ຄະແນນ | ມີຜູ້ທີ່ຢູ່ໃນເກນອາຍຸອອກແຮງງານ ມີວຽກເຮັດງານທໍາ ແລະ ມີລາຍຮັບທີ່ໝັ້ນຄົງ | 4 | |
| | ມີລາຍຮັບສະເລ່ຍຕໍ່ຫົວຄົນ ສູງກວ່າລາຍຮັບສະເລ່ຍຕໍ່ຫົວຄົນຂອງ ເມືອງ ,ເທດສະບານ, ນະຄອນ ທີ່ຕົນຂຶ້ນກັບ | ຢ່າງໜ້ອຍ 10 % ຂຶ້ນໄປຈຶ່ງໄດ້ ຄະແນນ 3 | |
| | ມີອັດຕາສ່ວນຄອບຄົວທຸກຍາກ ຕໍ່າກວ່າອັດຕາສະເລ່ຍຄອບຄົວທຸກຍາກຂອງ ເມືອງ ,ເທດສະບານ, ນະຄອນ ທີ່ຕົນຂຶ້ນກັບ | ຢ່າງໜ້ອຍ 5% ຈຶ່ງໄດ້ ຄະແນນ 4 | |
| | ມີລະບົບເສັ້ນທາງຄົມມະນາຄົມ ທີ່ໄດ້ຮັບການພັດທະນາ ຊຶ່ງຮັບປະກັນການຂົນສົ່ງ ແລະ ການໄປມາ ໄດ້ຢ່າງສະດວກ | 4 | |
| | ປະກອບສ່ວນ ໂຄສະນາ ,ເຜີຍແຜ່ ,ຝຶກອົບຮົມ ກ່ຽວກັບການນໍາໃຊ້ວິທະຍາສາດ, ເຕັກໂນໂລຊີ ເຂົ້າໃນການຜະລິດ ແລະ ວຽກງານອື່ນ ພ້ອມທັງເສີມຂະຫຍາຍການຜະລິດທີ່ເປັນມູນເຊື້ອ ຂອງບ້ານ , ມີການຮ່ວມມື ແລະ ແລກປ່ຽນບົດຮຽນ ເຊິ່ງກັນ ແລະ ກັນ | 4 | |
| 4. ມາດຕະຖານ ສິ່ງແວດລ້ອມ ແລະ ທິວທັດທີ່ສວຍງາມ<br><br>ປະກອບດ້ວຍ 07 ຕົວຊີ້ວັດ ຄະແນນເຕັມ 27 ຄະແນນ ຄະແນນຕົວຈິງ.......ຄະແນນ | ມີການເຄື່ອນໄຫວການຜະລິດ, ທຸລະກິດ ໂດຍປະຕິບັດ ຕາມກົດໝາຍ ແລະ ລະບຽບການກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ | 4 | |
| | ມີການເຄື່ອນໄຫວໂຄສະນາ ເຜີຍແຜ່ ແລະ ຍົກສູງຄວາມຮັບຮູ້ຂອງປະຊາຊົນ ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ຢ່າງເປັນປົກກະຕິ | 4 | |
| | ມີລະບົບ ສະໜອງນໍ້າສະອາດ ແລະ ລະບາຍນໍ້າເປື້ອນ | 4 | |
| | ມີເຮືອນຢູ່ອາໄສ, ສິ່ງກໍ່ສ້າງສາທາລະນະປະໂຫຍດ, ປ່າຊ້າ ທີ່ສອດຄ່ອງກັບແຜນກໍານົດຂອງຜັງເມືອງ | 4 | |
| | ມີການປັບປຸງ ແລະ ປົກປັກຮັກສາ ສະຖານທີ່ ເຄື່ອນໄຫວ ແລະ ບໍລິການສາທາລະນະ ໃຫ້ມີຄວາມສະອາດ ແລະ ຈົບງາມ | 4 | |
| | ມີຈຸດເກັບມ້ຽນຂີ້ເຫຍື້ອ ຊົ່ວຄາວ | 4 | |

| | | | |
|---|---|---|---|
| | ມີການຈັດຕັ້ງ ແລະ ເຂົ້າຮ່ວມການເຄື່ອນໄຫວ ກັນ ແລະ ຄວບຄຸມພະຍາດ ຢ່າງເຂັ້ມງວດ | 3 | |

ຈຳນວນມາດຕະຖານ ມີ 4 ມາດຕະຖານ
ຈຳນວນຕົວຊີ້ວັດ 26 ຕົວຊີ້ວັດ ຈຳນວນຄະແນນເຕັມລວມທັງໝົດມີ : 100 ຄະແນນ ເທົ່າກັບ 100 %
ວິທີຄິດໄລ່: ຄະແນນຕົວຈິງ x 100 ຫານ 100 ເທົ່າກັບ..............% ຕົວຢ່າງ :......... X 100% ເທົ່າກັບ.........%
100

ທີ່................................., ລົງວັນທີ............................

ຄະນະກຳມະການ
1....................................
2......................................
3.......................................

ອົງການປົກຄອງບ້ານ
1................................................
2.........................................
3.........................................

## ຄ. ມາດຕະຖານ ບ້ານວັດທະນະທຳທີ່ຍັງບໍ່ທັນບັນລຸຕົວຊີ້ວັດ ການປັບປຸງໃນປີ...............

| ລ/ດ | ມາດຕະຖານ ກິດຈະກຳທີ່ຈະປັບປຸງ | ຕົວຊີ້ວັດ | ໄລຍະເວລາ(ເດືອນ) | ໝາຍເຫດ |
|---|---|---|---|---|
| 1 | ມາດຕະຖານ ເຄົາລົບ ແລະ ປະຕິບັດ ແນວ ທາງ ນະໂຍບາຍ, ກົດໝາຍ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ໂດຍມີຕົວຊີ້ວັດ ຄື: | | | |
| | | | | |
| | | | | |
| | | | | |
| 2 | ມາດຕະຖານ ການເຄື່ອນໄຫວຊີວິດວັດທະນະທຳທີ່ອຸດົມສົມບູນ ໂດຍມີຕົວຊີ້ວັດ ຄື: | | | |
| | | | | |
| | | | | |
| | | | | |
| | | | | |
| 3 | ມາດຕະຖານ ພື້ນຖານເສດຖະກິດທີ່ໝັ້ນຄົງ ແລະ ມີການພັດທະນາ ໂດຍມີຕົວຊີ້ວັດ ຄື: | | | |
| | | | | |
| | | | | |
| | | | | |
| | | | | |
| 4 | ມາດຕະຖານ ສິ່ງແວດລ້ອມ ແລະ ທິວທັດ ທີ່ສວຍງາມ ໂດຍມີຕົວຊີ້ວັດ ຄື: | | | |
| | | | | |
| | | | | |
| | | | | |

## III. ການຈັດລະດັບ ຄອບຄົວ ແລະ ບ້ານວັດທະນະທຳ

**1. ລະດັບການສ້າງຄອບຄົວວັດທະນະທຳ ຢູ່ແຕ່ລະທ້ອງຖິ່ນ ໃຫ້ປະຕິບັດດັ່ງນີ້:**

ເນື່ອງຈາກວ່າສະພາບເສດຖະກິດ ແລະ ພື້ນຖານໂຄງລ່າງຂອງ ຄອບຄົວໃນແຕ່ລະເຂດແຕ່ລະທ້ອງຖິ່ນມີຄວາມແຕກຕ່າງກັນ ດັ່ງນັ້ນ, ຈຶ່ງກຳນົດການສ້າງຄອບຄົວວັດທະນະທຳ ເປັນ ສາມ ລະດັບຄື:

ກ. ເຂດຕົວເມືອງໃຫຍ່:

ການສ້າງຄອບຄົວວັດທະນະທຳຕ້ອງບັນລຸ ແປດສິບຫ້າສ່ວນຮ້ອຍ ຂຶ້ນໄປ ຂອງມາດຕະຖານການສ້າງຄອບ ຄົວວັດທະນະທຳ

ຂ. ເຂດຊົນນະບົດ (ທົ່ງພຽງ):

ການສ້າງຄອບຄົວວັດທະນະທຳຕ້ອງບັນລຸ ແປດສິບສ່ວນຮ້ອຍ ຂຶ້ນໄປ ຂອງມາດຕະຖານການສ້າງຄອບຄົວວັດທະນະທຳ

ຄ. ເຂດຊົນນະບົດ (ພູດອຍ):

ການສ້າງຄອບຄົວວັດທະນະທຳຕ້ອງບັນລຸ ເຈັດສິບຫ້າສ່ວນຮ້ອຍ ຂຶ້ນໄປ ຂອງມາດຕະຖານການສ້າງຄອບຄົວວັດທະນະທຳ

**2. ລະດັບການສ້າງບ້ານວັດທະນະທຳຢູ່ແຕ່ລະທ້ອງຖິ່ນ ໃຫ້ປະຕິບັດດັ່ງນີ້:**

ໂດຍອີງໃສ່ສະພາບເສດຖະກິດ-ສັງຄົມ, ເງື່ອນໄຂການທຳມາຫາກິນ, ສິ່ງອຳນວຍຄວາມສະດວກ, ຄວາມໜາແໜ້ນຂອງພົນລະເມືອງ ແລະ ພື້ນຖານໂຄງລ່າງ ມີຄວາມສະດວກ ແລະ ຫຍຸ້ງຍາກແຕກຕ່າງກັນ, ການສ້າງບ້ານວັດທະນະທຳ, ຈຶ່ງໄດ້ກຳນົດການສ້າງບ້ານວັດທະນະທຳ ເປັນ ສາມ ລະດັບຄື:

ກ. ເຂດຕົວເມືອງໃຫຍ່:

ການສ້າງບ້ານວັດທະນະທຳ ຕ້ອງບັນລຸ ແປດສິບສ່ວນຮ້ອຍ ຂຶ້ນໄປ ຂອງມາດຕະຖານການສ້າງບ້ານວັດທະນະທຳ

ຂ. ເຂດຊົນນະບົດ (ທົ່ງພຽງ):

ການສ້າງບ້ານວັດທະນະທຳ ຕ້ອງບັນລຸ ເຈັດສິບຫ້າສ່ວນຮ້ອຍ ຂຶ້ນໄປ ຂອງມາດຕະຖານການສ້າງບ້ານວັດທະນະທຳ

ຄ. ເຂດຊົນນະບົດ (ພູດອຍ)

ການສ້າງບ້ານວັດທະນະທຳ ຕ້ອງບັນລຸ ເຈັດສິບສ່ວນຮ້ອຍ ຂຶ້ນໄປ ຂອງມາດຕະຖານການສ້າງບ້ານວັດທະນະທຳ

## IV. ຂັ້ນຕອນ, ບາດກ້າວ ແລະ ການຈັດພິທີມອບ-ຮັບໃບຢັ້ງຢືນຄອບຄົວ ແລະ ບ້ານ ວັດທະນະທຳ

ຂັ້ນຕອນ, ບາດກ້າວ ແລະ ພິທີຮັບຮອງ ຄອບຄົວ ແລະ ບ້ານ ວັດທະນະທຳ ໃຫ້ປະຕິບັດ ດັ່ງນີ້:

ກ. ຂັ້ນຕອນ

1. ແຕ່ງຕັ້ງຄະນະຮັບຜິດຊອບວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ ຂັ້ນແຂວງ ປະກອບມີ:

1.1 ຕາງໜ້າອົງການປົກຄອງຂັ້ນແຂວງ (ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນ ຜູ້ຊີ້ນຳວຽກງານວັດທະນະທຳ-ສັງຄົມ).

1.2 ບັນດາອົງການປົກຄອງຂັ້ນເມືອງ ( ເຈົ້າເມືອງ, ເຈົ້ານະຄອນ, ເທດສະບານ).

1.3 ພະແນກ ຖວທ ແຂວງ ( ຫົວໜ້າພະແນກ ຖວທ ແຂວງ, ນະຄອນຫຼວງ).

1.4 ບັນດາຫົວໜ້າຫ້ອງການ ຖວທ ຂັ້ນເມືອງ.

1.5 ຕາງໜ້າບັນດາຂະແໜງວິຊາການຂັ້ນເມືອງ.

**2. ແຕ່ງຕັ້ງຄະນະຮັບຜິດຊອບວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ ຂັ້ນເມືອງ ປະກອບມີ:**

2.1 ຮອງເຈົ້າເມືອງ.

2.2 ຮອງຫົວໜ້າຫ້ອງການ ຖວທ ຂັ້ນເມືອງ ຜູ້ຮັບຜິດຊອບວຽກງານວັດທະນະທຳ.

2.3 ຕາງໜ້າບັນດາຂະແໜງວິຊາການຂັ້ນເມືອງ.

2.4 ອົງການປົກຄອງບ້ານກ່ຽວຂ້ອງ.

**3. ກຳນົດບ້ານ ແລະ ຄອບຄົວ ເປົ້າໝາຍທີ່ຈະສ້າງເປັນບ້ານ ແລະ ຄອບຄົວວັດທະນະທຳ**

3.1 ຈັດກອງປະຊຸມ ຂັ້ນແຂວງ, ຂັ້ນເມືອງ ເພື່ອກຳນົດເອົາບ້ານ ແລະ ຄອບຄົວ ທີ່ຈະສ້າງເປັນບ້ານ ແລະ ຄອບຄົວ ວັດທະນະທຳໃໝ່.

3.2 ກອງເລຂາເຮັດບົດບັນທຶກ ແລະ ເຮັດບົດລາຍງານຫາສາຍຕັ້ງ ແລະ ສາຍຂວາງ.

3.3 ອອກຂໍ້ຕົກລົງຂັ້ນແຂວງ, ຂັ້ນເມືອງ ວ່າດ້ວຍການອະນຸມັດຮັບຮອງເອົາບ້ານ ແລະ ຄອບຄົວ ເປົ້າໝາຍທີ່ສ້າງເປັນບ້ານ ແລະ ຄອບຄົວ ວັດທະນະທຳ.

**4. ສ້າງແຜນເຄື່ອນໄຫວ**

4.1 ສ້າງແຜນກຳນົດ ວຽກງານ, ງົບປະມານ ແລະ ບຸກຄະລາກອນ.

4.2 ຈັດກອງປະຊຸມເຜີຍແຜ່ແຜນວຽກລວມ.

4.3 ນຳສົ່ງແຜນເຄື່ອນໄຫວໃຫ້ແຕ່ລະຄະນະຮັບຜິດຊອບລາຍງານສາຍຕັ້ງ ແລະ ສາຍຂວາງ ປະຕິບັດ.

**5. ການຈັດຕັ້ງປະຕິບັດ**

5.1 ລົງເຜີຍແຜ່ຂໍ້ມູນຢູ່ຂັ້ນບ້ານກ່ຽວກັບມາດຕະຖານ ແລະ ແຜນການ ສ້າງຄອບຄົວ ແລະ ບ້ານວັດທະນະທຳ ພ້ອມທັງເກັບກຳຂໍ້ມູນຢູ່ບ້ານເປົ້າໝາຍ.

5.2 ບັນດາຂະແໜງວິຊາການ ລົງໂຄສະນາ, ເຜີຍແຜ່, ຊຸກຍູ້ ວຽກງານຂອງຕົນ ຕາມມາດຕະຖານ, ຕົວຊີ້ວັດທີ່ກ່ຽວຂ້ອງຂອງວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທຳ.

**ຂ. ບາດກ້າວການປະເມີນ ແລະ ປະເມີນຜົນ**

**1. ການປະເມີນ ແລະ ປະເມີນຜົນບ້ານວັດທະນະທຳ**

**1.1 ປະເມີນໄລຍະທີໜຶ່ງ:** ປະເມີນບ້ານເປົ້າໝາຍທີ່ຈະສ້າງເປັນບ້ານວັດທະນະທຳ ປະຕິບັດ ດັ່ງນີ້:

- ກອງເລຂາກະກຽມແບບຟອມປະເມີນ ( ແບບຟອມທີ 2).
- ຄະນະກຳມະການຂັ້ນແຂວງ ລົງກວດກາ ປະເມີນ ຕາມມາດຕະຖານບ້ານວັດທະນະທຳ.
- ຈັດກອງປະຊຸມປະເມີນ.
- ກອງເລຂາເປັນຜູ້ບັນທຶກ ແລະ ສະຫຼຸບລາຍງານ ຕາມສາຍຕັ້ງ ແລະ ສາຍຂວາງ.

**1.2 ປະເມີນຜົນໄລຍະທີສອງ:** ພາຍຫຼັງໄດ້ຮັບໃບຢັ້ງຢືນເປັນບ້ານວັດທະນະທຳແລ້ວ ໃນແຕ່ລະປີປະຕິບັດ ດັ່ງນີ້:

- ກອງເລຂາກະກຽມແບບຟອມປະເມີນຜົນ (ແບບຟອມທີ 4).
- ຄະນະກຳມະການຂັ້ນແຂວງ ລົງກວດກາ ປະເມີນຜົນ ຕາມມາດຕະຖານບ້ານວັດທະນະທຳ.

- ຈັດກອງປະຊຸມປະເມີນຜົນໃນແຕ່ລະປີ, ຄົບ ສາມ ປີ ຄົ້ນຄວ້າການຍ້ອງຍໍ.

- ກອງເລຂາເປັນຜູ້ບັນທຶກ ແລະ ສະຫຼຸບລາຍງານ ຕາມສາຍຕັ້ງ ແລະ ສາຍຂວາງ.

**2. ການປະເມີນ ແລະ ປະເມີນຜົນຄອບຄົວວັດທະນະທຳ**

2.1 **ປະເມີນໄລຍະທີໜຶ່ງ:** ປະເມີນຄອບຄົວເປົ້າໝາຍທີ່ຈະສ້າງເປັນຄອບຄົວວັດທະນະທຳ ປະຕິບັດ ດັ່ງນີ້:

- ກອງເລຂາກະກຽມແບບຟອມປະເມີນ ( ແບບຟອມທີ 1).
- ຄະນະກຳມະການຂັ້ນເມືອງ ລົງກວດກາ ປະເມີນ ຕາມມາດຕະຖານຄອບຄົວວັດທະນະທຳ.
- ຈັດກອງປະຊຸມປະເມີນ.
- ກອງເລຂາເປັນຜູ້ບັນທຶກ ແລະ ສະຫຼຸບລາຍງານ ຕາມສາຍຕັ້ງ ແລະ ສາຍຂວາງ.

2.2 **ປະເມີນຜົນໄລຍະທີສອງ:** ພາຍຫຼັງໄດ້ຮັບໃບຢັ້ງຢືນເປັນຄອບຄົວວັດທະນະທຳແລ້ວ ໃນແຕ່ລະປີ ປະຕິບັດ ດັ່ງນີ້:

- ກອງເລຂາກະກຽມແບບຟອມປະເມີນຜົນ (ແບບຟອມທີ 3).
- ຄະນະກຳມະການຂັ້ນເມືອງ ລົງກວດກາ ປະເມີນຜົນ ຕາມມາດຕະຖານຄອບຄົວວັດທະນະທຳ.
- ຈັດກອງປະຊຸມປະເມີນຜົນໃນແຕ່ລະປີ, ຄົບ ສາມ ປີ ຄົ້ນຄວ້າການຍ້ອງຍໍ.
- ກອງເລຂາເປັນຜູ້ບັນທຶກ ແລະ ສະຫຼຸບລາຍງານ ຕາມສາຍຕັ້ງ ແລະ ສາຍຂວາງ.

**ຄ. ການຈັດພິທີມອບ-ຮັບໃບຢັ້ງຢືນຄອບຄົວ ແລະ ບ້ານ ວັດທະນະທຳ**

**1. ການຈັດພິທີມອບ-ຮັບໃບຢັ້ງຢືນຄອບຄົວວັດທະນະທຳ**

**1.1 ຂັ້ນຕອນການກະກຽມ:**

- ຄະນະກຳມະການຂັ້ນເມືອງ ໂດຍແມ່ນຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ, ເທດສະບານ, ນະຄອນ ສົມທົບກັບອົງການປົກຄອງບ້ານ ກະກຽມຄວາມພ້ອມໃນການຈັດພິທີມອບ-ຮັບໃບຢັ້ງຢືນຄອບຄົວວັດທະນະທຳໃຫ້ບັນດາຄອບຄົວທີ່ໄດ້ຮັບຂໍ້ຕົກລົງເປັນຄອບຄົວວັດທະນະທຳ(ກ່ອນມື້ຈັດພິທີ 10 ວັນ).

- ຈັດຫາສະຖານທີ່ ແລະ ວັນເວລາ ທີ່ເໝາະສົມ ເຊັ່ນ: ເດີ່ນໂຮງຮຽນ, ເດີ່ນຫ້ອງການບ້ານ, ເດີ່ນທີ່ເປົ່າຫວ່າງ ທີ່ກວ້າງຂວາງ ສາມາດບັນຈຸພົນລະເມືອງ 50 ຄົນຂຶ້ນເມື່ອ (ວັນເວລາ ກຳນົດເອົາ ວັນເສົາ-ວັນທິດ, ຍາມພັກການຜະລິດ....ຫຼື ມື້ສະຫຼຸບວຽກປະຈຳເດືອນ ປະຈຳປີ ຂອງບ້ານ).

- ຄະນະກຳມະການ ສົມທົບກັບອົງການປົກຄອງບ້ານ ແຕ່ງຕັ້ງຄະນະຮັບຜິດຊອບແຕ່ລະໜ້າວຽກໃຫ້ແຕ່ລະບຸກຄົນ ແລະ ເຊື້ອເຊີນແຂກເຂົ້າຮ່ວມຈາກຂະແໜງການອ້ອມຂ້າງເມືອງ.

- ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ, ເທດສະບານ, ນະຄອນ ກະກຽມບົດສະຫຼຸບການປະເມີນຄອບຄົວ ຕາມມາດຕະຖານຂອງການສ້າງ ຄອບຄົວວັດທະນະທຳ ແລະ ທິດທາງແຜນການໃນຕໍ່ໜ້າ.

**1.2 ວາລະຈັດພິທີ:**

- ຕ້ອນຮັບແຂກ ແລະ ເຕົ້າໂຮມພໍ່ແມ່ປະຊາຊົນ.
- ສະແດງສິລະປະຕ້ອນຮັບ 1-2 ລາຍການ ( ຖ້າມີ).
- ເຄົາລົບທຸງຊາດ.
- ກ່າວຈຸດປະສົງ ພ້ອມສະເໜີແຂກເຂົ້າຮ່ວມ.
- ຜ່ານຂໍ້ຕົກລົງຂອງເຈົ້າເມືອງກ່ຽວກັບການອະນຸມັດຈັດພິທີທາງການ ( ຫ້ອງການ ຖວທ ຂັ້ນເມືອງ).

- ຜ່ານບົດສະຫຼຸບການປະເມີນຕາມມາດຕະຖານຄອບຄົວວັດທະນະທຳ ແລະ ທິດທາງແຜນການໃນຕໍ່ໜ້າ (ຫ້ອງການ ຖວທ ຂັ້ນເມືອງ).
- ຜ່ານຂໍ້ຕົກລົງຂອງເຈົ້າເມືອງ ມອບໃບຢັ້ງຢືນຄອບຄົວວັດທະນະທຳ ( ຫ້ອງການ ຖວທ ຂັ້ນເມືອງ).
- ມອບໃບຢັ້ງຢືນ ( ຕ່າງໜ້າປະທານຜູ້ມີຕຳແໜ່ງສູງສຸດ).
- ຕາງໜ້າຄອບຄົວຂຶ້ນຮັບໃບຢັ້ງຢືນ.
- ຂັ້ນເທີງໂອ້ລົມ (ປະທານ).
- ຖ່າຍພາບລວມ.
- ຊົມສິລະປະ, ຮັບຊົມການວາງສະແດງສິນຄ້າ ຜະລິດຕະພັນວັດທະນະທຳ (ຖ້າມີ)

**2. ການຈັດພິທີມອບ-ຮັບໃບຢັ້ງຢືນບ້ານວັດທະນະທຳ**

**2.1 ການກະກຽມ:**

- ຄະນະກຳມະການຂັ້ນແຂວງ ໂດຍແມ່ນພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ນະຄອນຫຼວງ ສົມທົບກັບຫ້ອງການ ຖວທ ເມືອງ, ເທດສະບານ, ນະຄອນ ສົມທົບກັບອົງການປົກຄອງເມືອງ, ບ້ານ ຄົ້ນຄວ້າກະກຽມຄວາມພ້ອມໃນການຈັດພິທີມອບ-ຮັບໃບຢັ້ງຢືນບ້ານວັດທະນະທຳທີ່ໄດ້ຮັບຂໍ້ຕົກລົງເປັນບ້ານ ວັດທະນະທຳ (ກ່ອນມື້ຈັດພິທີ 15 ວັນ).

- ຈັດຫາສະຖານທີ່ ແລະ ວັນເວລາ ທີ່ເໝາະສົມ ເຊັ່ນ: ເດີ່ນໂຮງຮຽນ, ເດີ່ນຫ້ອງການບ້ານ , ເດີ່ນທີ່ເປົ່າ ຫວ່າງ ທີ່ກວ້າງຂວາງ ສາມາດບັນຈຸພົນລະເມືອງ 100 ຄົນຂຶ້ນເມື່ອ (ວັນເວລາ ກຳນົດເອົາ ວັນເສົາ-ວັນທິດ ຫຼື ຍາມພັກການຜະລິດ.....ຫຼື ວັນສຳຄັນຂອງບ້ານ).

- ຄະນະກຳມະການ ສົມທົບກັບອົງການປົກຄອງບ້ານ ແຕ່ງຕັ້ງຄະນະຮັບຜິດຊອບແຕ່ລະໜ້າວຽກໃຫ້ແຕ່ ລະບຸກຄົນ; ເຊື້ອເຊີນແຂກເຂົ້າຮ່ວມຈາກຂະແໜງການອ້ອມຂ້າງເມືອງ.

- ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ, ເທດສະບານ, ນະຄອນ ກະກຽມບົດ ສະຫຼຸບ ການປະເມີນບ້ານ ຕາມມາດຕະຖານບ້ານວັດທະນະທຳ ແລະ ທິດທາງແຜນການໃນຕໍ່ໜ້າ.

- ຄັດເລືອກຄອບຄົວຕົວແບບ ສາມ ຫາ ຫ້າ ຄອບຄົວ ເພື່ອກະກຽມການນຳສະເໜີຄວາມເປັນແບບຢ່າງ ໃດໜຶ່ງຂອງຄອບຄົວ.

**2.2 ວາລະຈັດພິທີ:**

- ຕ້ອນຮັບແຂກ ແລະ ເຕົ້າໂຮມພໍ່ແມ່ປະຊາຊົນ.
- ສະແດງສິລະປະຕ້ອນຮັບ 1-2 ລາຍການ ( ຖ້າມີ).
- ເຄົາລົບທຸງຊາດ.
- ກ່າວຈຸດປະສົງ ພ້ອມສະເໜີແຂກເຂົ້າຮ່ວມ.
- ຜ່ານຂໍ້ຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບການອະນຸມັດຈັດພິທີທາງການ ( ຫ້ອງ ການ ຖວທ ເມືອງ).
- ຜ່ານບົດສະຫຼຸບ ການປະເມີນບ້ານ ຕາມມາດຕະຖານຂອງການສ້າງບ້ານວັດທະນະທຳ ແລະ ທິດທາງ ແຜນການໃນຕໍ່ໜ້າ (ຫ້ອງການ ຖວທ ເມືອງ).
- ຜ່ານຂໍ້ຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ມອບໃບຢັ້ງຢືນບ້ານວັດທະນະທຳ (ຫ້ອງການ ຖວທ ເມືອງ).

- ມອບໃບຢັ້ງຢືນ ( ຕາງໜ້າປະທານຜູ້ມີຕຳແໜ່ງສູງສຸດ).
- ຜູ້ຂຶ້ນຮັບໃບຢັ້ງຢືນ ( ຕາງໜ້າຄະນະບ້ານ).
- ມອບຂອງຂັວນ ແລະ ເຄື່ອງອຸປະຖຳຕ່າງໆ (ຖ້າມີ).
- ຂຶ້ນເຫີງໂອ້ລົມ (ຕາງໜ້າປະທານຜູ້ມີຕຳແໜ່ງສູງສຸດ).
- ນາຍບ້ານຂຶ້ນຮັບຄຳໂອ້ວາດ.
- ລັ່ນຄ້ອງ 9 ບາດ ( ປະທານຜູ້ມີຕຳແໜ່ງສູງສຸດ).
- ຕັດແຖບຜ້າ ແລະ ປ່ອຍປຸ້ມເປົ້າ ( ຖ້າມີ).
- ເປີດປ້າຍບ້ານວັດທະນະທຳ ( ປະທານຜູ້ມີຕຳແໜ່ງສູງສຸດ).
- ຖ່າຍພາບລວມ.
- ຈັດພິທີບາສີສູ່ຂັວນ ແລະ ພາເຂົ້າສາມັກຄີ (ອີງຕາມເງື່ອນໄຂຂອງປະຊາຊົນທີ່ສາມາດຈັດໄດ້).
- ຊົມສິລະປະ, ຮັບຊົມການວາງສະແດງ-ຂາຍສິນຄ້າ ຜະລິດຕະພັນວັດທະນະທຳ (ຖ້າມີ).

**3. ບັນດາປ້າຍເວທີ, ປ້າຍບ້ານ, ປ້າຍປຸມເປົ້າ ແລະ ປ້າຍຄຳຂັວນຊົມເຊີຍຕ່າງໆ.**

- ປ້າຍເວທີພິທີປະກາດບ້ານວັດທະນະທຳ ຕ້ອງປະຕິບັດ ດັ່ງລຸ່ມນີ້:

ຕົວໜັງສືລາວ, ສ່ວນຂະໜາດຕົວໜັງສື ແມ່ນອີງຕາມຄວາມເໝາະສົມຂອງປ້າຍ, ຕົວໜັງສືແມ່ນ ສີຂາວ ແລະ ພື້ນຂອງປ້າຍແມ່ນ ສີຟ້າ

ຂະໜາດປ້າຍເວທີແມ່ນອີງຕາມຄວາມເໝາະສົມຕາມສະຖານທີ່.



- ປ້າຍບ້ານວັດທະນະທຳ ໃຫ້ຕິດຕັ້ງໃສ່ສະຖານທີ່ເໝາະສົມ ທີ່ສາມາດເບິ່ງເຫັນໄດ້ງ່າຍ ໂດຍບໍ່ໃຫ້ກີດຂວາງ

ຄວາມຍາວ 1,20 ແມັດ ຂຶ້ນໄປ

ຄວາມກວ້າງ 50 ຊັງຕີແມັດ

ທຸງຊາດລາວ

ເຄື່ອງໝາຍ ສັນຍາລັກຂອງ ບ້ານ

ບ້ານ....................

ບ້ານວັດທະນະທຳ

- ປ້າຍປຸມເປົ້າບ້ານວັດທະນະທຳ (ຖ້າມີ)

ຄວາມຍາວ 2 ແມັດ

ຄວາມກວ້າງ 90 ຊັງຕີແມັດ

ພິທີຮັບຮອງເອົາ

................ເປັນ.................ວັດທະນະທຳ

ດັ່ງວັນທີ........../......./.......

ປ້າຍຄຳຂວັນຊົມເຊີຍຕ່າງໆເພື່ອຕິດໃສ່ປະຕູໂຂງທາງເຂົ້າເມືອງ ແລະ ສະຖານທີ່ສຳຄັນຕ່າງໆ.

ຊາວບ້ານ.........ເມືອງ.........ສຸດແສນທະນົງໃຈທີ່ໄດ້ຮັບນາມມະຍົດເປັນ..................
ວັດທະນະທຳ

ຊາວບ້ານ.........ເມືອງ..........ຍິນດີຕ້ອນຮັບແຂກທີ່ມີກຽດທຸກທ່ານມາຮ່ວມພິທີປະກາດ........ເປັນ
..........ວັດທະນະທຳ

ຊົມເຊີຍຜົນສຳເລັດຂອງວຽກງານການສ້າງ..........................................ວັດທະນະທຳຢ່າງສຸດໃຈ

V. ການປະເມີນຜົນຄອບຄົວ ແລະ ບ້ານ ວັດທະນະທຳ

1. ການປະເມີນຜົນ ຄອບຄົວວັດທະນະທຳ ທີ່ໄດ້ຮັບການຢັ້ງຢືນໄປແລ້ວ

ການປະເມີນຜົນຄອບຄົວວັດທະນະທຳ ທີ່ໄດ້ຮັບການຢັ້ງຢືນເປັນຄອບຄົວວັດທະນະທຳແລ້ວໃນແຕ່ລະປີໃຫ້ປະຕິບັດຕາມແບບຟອມ ດັ່ງນີ້:

**ແບບຟອມທີ 3**

**ແບບຟອມປະເມີນຜົນຄອບຄົວວັດທະນະທຳ**

ຄອບຄົວວັດທະນະທຳທີ່ໄດ້ຮັບໃບຢັ້ງຢືນແຕ່ປີ 2020 ຄືນຫຼັງ (ກ່ອນປະກາດໃຊ້ ດຳລັດ 123/ລບ)

ປະເມີນຜົນຄືນປີລະຄັ້ງ

## ກ. ຂໍ້ມູນທົ່ວໄປ

1. ຊື່ ແລະ ນາມສະກຸນ ຜູ້ສະໜອງຂໍ້ມູນ: ............................................ອາຍຸ...............ປີ
   ອາຊີບ:..................................................,ສາສະໜາ.......................................
2. ຊື່ບ້ານ:....................................,ເມືອງ......................,ແຂວງ..............................
3. ຈຳນວນຄົນໃນຄົວເຮືອນ: ...................... ຄົນ, ຍິງ: ....................ຄົນ.
4. ສະຖານະພາບ ☐ ແຕ່ງງານ ☐ ຮ້າງ ☐ ໝ້າຍ ☐ ໂສດ
5. ລະດັບການສຶກສາສູງສຸດຂອງຫົວໜ້າຄອບຄົວຈົບຊັ້ນໃດ?.
   ☐ບໍ່ມີຊັ້ນ ☐ ປ 1- ປ 5 ☐ມ 1 - ມ 4 ☐ມ 4 - ມ 7 ☐ຊັ້ນຕົ້ນ ☐ຊັ້ນກາງ
   ☐ຊັ້ນສູງ ☐ປະລິນຍາຕີ ☐ປະລິນຍາໂທ ☐ປະລິນຍາເອກ ☐ອື່ນໆ.........................

## ຂ. ມາດຕະຖານ, ຕົວຊີ້ວັດ ແລະ ການໃຫ້ຄະແນນ

**ການປະເມີນຜົນຄອບຄົວວັດທະນະທຳ ຕ້ອງບັນລຸຕົວຊີ້ວັດ 85 % ຂຶ້ນໄປ**

ການໃຫ້ຄະແນນ: 10-9 ດີຫຼາຍ; ຄະແນນ 8-7 ດີ; ຄະແນນ 6-5 ກາງ; ຄະແນນ 4-3 ອ່ອນ; 2-1 ອ່ອນຫຼາຍ

| ລ/ດ | ເນື້ອໃນຕົວຊີ້ວັດ | ຄະແນນ |
|---|---|---|
| 1 | ມີເຮືອນຢູ່ເປັນຂອງຕົນເອງ ອາຍຸນຳໃຊ້ 10 ປີຂຶ້ນໄປ ຊຶ່ງປະກອບດ້ວຍ: ເຮືອນຄົວ, ວິດຖ່າຍ, ຄອກສັດ, ພືດສວນຄົວ, ໝາກໄມ້ກິນໝາກ...... | |
| 2 | ສະມາຊິກໃນຄອບຄົວມີວຽກເຮັດງານທຳ ຕາມເກນອາຍຸ ສາມາດອອກແຮງງານໄດ້ມີລາຍໄດ້ສະເລ່ຍ 6 ລ້ານ ຫາ 8 ລ້ານ ຕໍ່ປີ/ຄົນ | |
| 3 | ສະມາຊິກໃນຄອບຄົວບໍ່ຜິດຖຽງກັນ, ອາລະວາດຕີກັນ ແລະ ບໍ່ສ້າງຄວາມຫຍຸ້ງຍາກພາຍໃນຄອບຄົວ | |
| 4 | ສະມາຊິກໃນຄອບຄົວ ຊ່ວຍເຫຼືອເບິ່ງແຍ່ງກັນ ເປັນຕົ້ນ ຄົນເຖົ້າ, ຄົນພິການ, ເດັກນ້ອຍ..... | |
| 5 | ຄອບຄົວປະຕິບັດສິດ ສະເໝີພາບຍິງ-ຊາຍ ແລະ ບໍ່ໃຊ້ຄວາມຮຸນແຮງກັບຄອບຄົວ | |
| 6 | ຄອບຄົວຕັ້ງໜ້າເຂົ້າຮ່ວມປະຕິບັດແນວທາງປ້ອງກັນຊາດ ປ້ອງກັນຄວາມສະຫງົບ | |
| 7 | ສະມາຊິກພາຍໃນຄອບຄົວ ເປັນຕົ້ນ ເດັກນ້ອຍໄດ້ຮັບການສັກຢາກັນພະຍາດຕາມເກນອາຍຸ | |
| 8 | ເດັກນ້ອຍໄດ້ເຂົ້າໂຮງຮຽນຕາມເກນອາຍຸ ທີ່ສຶກສາວາງອອກ | |

| | | |
|---|---|---|
| 9 | ພໍ່ ແມ່ ເອົາໃຈໃສ່ສິດສອນ ລູກ ຫຼານ ດ້ານຄຸນສົມບັດ ແລະ ຮູ້ຈັກກະຕັນຍູຕໍ່ຜູ້ມີພະຄຸນ | |
| 10 | ເປັນຄອບຄົວທີ່ປະຕິບັດກົດໝາຍ | |
| 11 | ສະມາຊິກໃນຄອບຄົວບໍ່ຄ້າຂາຍສິ່ງເສບຕິດ ແລະ ຄ້າຂາຍສິ່ງທີ່ຜິດລະບຽບ, ກົດໝາຍ | |
| 12 | ຄອບຄົວທີ່ລົບລ້າງຄວາມເຊື່ອຖືງົມງວາຍ ແລະ ຈຳກັດສິ່ງທີ່ຫຼ້າຫຼັງ | |
| 13 | ສະມາຊິກໃນຄອບຄົວປະຕິບັດການນຸ່ງຖືແຕ່ງກາຍຕາມຮີດຄອງປະເພນີ ເປັນຕົ້ນ ວັດວາອາຮາມ, ສະຖານທີ່ສາທາລະນະ ແລະ ອື່ນໆ ໃຫ້ຖືກຕາມກາລະ ເທສະ | |
| 14 | ຄອບຄົວທີ່ປະຕິບັດງານບຸນປະເພນີ, ພິທີກຳ ທີ່ມີລັກສະນະຫຼົ້ນກິນບໍ່ຟຸ້ມເຟືອຍ | |
| 15 | ຄອບຄົວທີ່ຊ່ວຍເຫຼືອເບິ່ງແຍ່ງເຊິ່ງກັນ ແລະ ກັນ, ຊ່ວຍເຫຼືອຄອບຄົວອ້ອມຂ້າງໃກ້ຄຽງ ພາຍໃນບ້ານ | |
| 16 | ຄອບຄົວທີ່ປະກອບສ່ວນຊຸກຍູ້ຊ່ວຍເຫຼືອກັນ ແລະ ກັນພາຍໃນບ້ານ, ເມືອງ | |
| 17 | ອະນາໄມ ຂອບເຂດເຮືອນຂອງຕົນເອງ 2 ເທື່ອ ຕໍ່ຄັ້ງ/ທິດ | |
| ຄະແນນລວມ:........................................ | | |
| ຄະແນນສະເລ່ຍ:.................................% | | |

<u>ໝາຍເຫດ</u>: ວິທີຄິດໄລ່ຄະແນນ: ຄະແນນລວມ X 100 ຫານ 17 = ..........%

ທີ............................,ວັນທີ..........................

ອົງການປົກຄອງບ້ານ                                        ຜູ້ສະໜອງຂໍ້ມູນ

**ຄະນະກຳມະການ**

1............................................

2...........................................

3...........................................

4...........................................

5...........................................

2. ການປະເມີນຜົນ ບ້ານວັດທະນະທຳ

ການປະເມີນຜົນບ້ານວັດທະນະທຳ ທີ່ໄດ້ຮັບການຢັ້ງຢືນເປັນບ້ານວັດທະນະທຳແລ້ວ ໃນແຕ່ລະປີໃຫ້ປະຕິບັດຕາມແບບຟອມ ດັ່ງນີ້:

**ແບບຟອມທີ 4**

## ແບບຟອມປະເມີນຜົນບ້ານວັດທະນະທຳ

ບ້ານວັດທະນະທຳທີ່ໄດ້ຮັບໃບຢັ້ງຢືນແຕ່ປີ 2020 ຄືນຫຼັງ (ກ່ອນປະກາດໃຊ້ ດຳລັດ 123/ລບ)

ປະເມີນຜົນຄືນປີລະຄັ້ງ

**I. ຂໍ້ມູນທົ່ວໄປ.**

1. ຊື່ບ້ານ:.....................................,ເມືອງ......................,ແຂວງ..........................
2. ຈຳນວນພົນລະເມືອງ: ...................... ຄົນ, ຍິງ: ....................ຄົນ.
3. ຄອບຄົວ...............ຄອບຄົວ, ຄອບຄົວວັດທະນະທຳ.................ຄອບຄົວ, ກວມເອົາ.........%
4. ວັນ ເດືອນ ປີ ສ້າງຕັ້ງບ້ານ......................
5. ຈຳນວນແຮງງານຕົ້ນຕໍ..................ຄົນ, ຈຳນວນແຮງງານສຳຮອງ...................ຄົນ

**II. ຂໍ້ມູນກ່ຽວກັບມາດຕະຖານບ້ານວັດທະນະທຳ.**

**ການປະເມີນຜົນບ້ານວັດທະນະທຳ ຕ້ອງບັນລຸຕົວຊີ້ວັດ 80 % ຂຶ້ນໄປ**

ການໃຫ້ຄະແນນ: 10-9 ດີຫຼາຍ; ຄະແນນ 8-7 ດີ; ຄະແນນ 6-5 ກາງ; ຄະແນນ 4-3 ອ່ອນ; 2-1 ອ່ອນຫຼາຍ

| ລ/ດ | ເນື້ອໃນຕົວຊີ້ວັດ | ຄະແນນ |
|---|---|---|
| 1 | ມີຄອບຄົວວັດທະນະທຳ ກວມເອົາ 85% ຂຶ້ນໄປ | |
| 2 | ໄດ້ຮັບໜ່ວຍພັກປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ 2 ປີຕໍ່ເນື່ອງຂຶ້ນໄປ | |
| 3 | ບ້ານທີ່ເຄົາລົບ ແລະ ປະຕິບັດກົດໝາຍ ແລະ ລະບຽບກ່ຽວກັບຄວາມເປັນລະບຽບຮຽບຮ້ອຍ, ຄວາມປອດໄພທາງທາງສັນຈອນ | |
| 4 | ມີກົດລະບຽບຂອງບ້ານ ໂດຍບໍ່ຂັດກັບກົດໝາຍ ແລະ ລະບຽບການ | |
| 5 | ມີລະບຽບການຄຸ້ມຄອງ ກ່ຽວກັບການຈັດງານບຸນປະເພນີ, ພິທີກຳ ທີ່ມີລັກສະນະຫຼິ້ນກິນແບບຟຸ່ມເຟືອຍ ຄຸ້ມຄອງສະມາຊິກພາຍໃນບ້ານ | |
| 6 | ປະຕິບັດ ສິດສະເໝີພາບ ຍິງ-ຊາຍ, ບໍ່ໃຊ້ຄວາມຮຸນແຮງໃນຄອບຄົວ | |
| 7 | ບ້ານໄດ້ຮັບນາມມະຍົດ ຕາມຂໍ້ແຂ່ງຂັນ ຂະບວນການຮັກຊາດ ຮັກພັດທະນາ | |
| 8 | ປະຊາຊົນພາຍໃນບ້ານຮຽນຈົບປະຖົມສຶກສາຂຶ້ນໄປ | |
| 9 | ສະມາຊິກພາຍໃນບ້ານປະຕິບັດການນຸ່ງຖືແຕ່ງກາຍຕາມຮີດຄອງປະເພນີ ເປັນຕົ້ນ ວັດວາອາຮາມ, ສະຖານທີ່ສາທາລະນະ ແລະ ອື່ນໆ ໃຫ້ຖືກຕ້ອງຕາມກາລະ ເທສະ | |
| 10 | ມີສະໂມສອນ ແລະ ມີການເຄື່ອນໄຫວກິດຈະກຳ | |
| 11 | ມີຫ້ອງມູນເຊື້ອ, ຫໍຂ່າວ ແລະ ມີການເຄື່ອນໄຫວເປັນປະຈຳ | |
| 12 | ມີໂທລະໂຄ່ງປະຈຳບ້ານເພື່ອເຜີຍແຜ່ຂໍ້ມູນຂ່າວສານ | |

| | | |
|---|---|---|
| 13 | ໜ່ວຍສິລະປະວັນນະຄະດີ ປະຈຳບ້ານ ໃນການປະກອບສ່ວນໃນງານສະເຫຼີມສະຫຼອງ ຕ້ອນຮັບກອງປະຊຸມ ແລະ ວັນສຳຄັນຂອງຊາດ | |
| 14 | ຈັດກິດຈະກຳ ກິລາກາຍະກຳ ຢ່າງໜ້ອຍ 1 ຄັ້ງ/ເດືອນ | |
| 15 | ຈັດເທດສະການຕະຫຼາດນັດວາງສະແດງສິນຄ້າ ຫັດຖະກຳ, ກະສິກຳ, ສິລະປະກຳ ຂອງປະຊາຊົນ ສາມາດດຶງດູດນັກທ່ອງທ່ຽວ | |
| 16 | ມີການປົກປັກ ຮັກສາ ຟື້ນຟູ ແຫຼ່ງທ່ອງທ່ຽວ ທາງປະຫັວດສາດ ທຳມະຊາດ | |
| 17 | ບ້ານທີ່ໄດ້ຮັບນາມມະຍົດ 1 ບ້ານ 1 ຜະລິດຕະພັນ | |
| 18 | ມີກອງທຶນຊ່ວຍເຫຼືອເຊິ່ງກັນ ແລະ ກັນ | |
| 19 | ສະມາຊິກພາຍໃນບ້ານໄດ້ເຂົ້າຮ່ວມຝຶກອົບຮົມທາງດ້ານວິຊາຊີບ (ຫັດຖະກຳ, ສິລະປະກຳ, ກະສິກຳ.....) | |
| 20 | ສະມາຊິກພາຍໃນບ້ານອອກແຮງງານລວມ ອະນາໄມຂອບເຂດບ້ານ 1 ຄັ້ງຕໍ່ເດືອນ | |
| 21 | ຂອບເຂດເຮືອນຂອງປະຊາຊົນ ມີຮົ້ວອ້ອມ, ປູກດອກໄມ້, ຕົ້ນໄມ້ກິນໝາກ... | |
| 22 | ມີລະບົບສະໜອງນ້ຳ ແລະ ລະບົບນ້ຳເປື້ອນ | |
| 23 | ສະມາຊິກພາຍໃນບ້ານບໍ່ຄ້າຂາຍສິ່ງເສບຕິດ ແລະ ຄ້າຂາຍສິ່ງທີ່ຜິດ ກົດໝາຍ ແລະ ລະບຽບການ | |
| 24 | ບ້ານທີ່ລົບລ້າງຄວາມເຊື່ອຖືງົມງວາຍ ແລະ ຈຳກັດສິ່ງທີ່ຫຼາຫຼັງ | |
| 25 | ສະມາຊິກພາຍໃນບ້ານໄດ້ຮັບການສັກຢາກັນພະຍາດ ແລະ ຕ້ານການແຜ່ພະຍາດ ໃນແຕ່ລະໄລຍະ | |
| 26 | ແຕ່ລະເຮືອນມີຈຸດເກັບມ້ຽນຂີ້ເຫຍື້ອຊົ່ວຄາວ | |
| 27 | ປະຊາຊົນພາຍໃນບ້ານຊ່ວຍເຫຼືອເບິ່ງແຍ່ງເຊິ່ງກັນ ແລະ ກັນ, ຊ່ວຍເຫຼືອເບິ່ງແຍ່ງບ້ານອ້ອມຂ້າງໃກ້ຄຽງ | |
| 28 | ສະມາຊິກພາຍໃນບ້ານທີ່ປະກອບສ່ວນລະດົມທຶນຊຸກຍູ້ຊ່ວຍເຫຼືອກັນ ແລະ ກັນ, ສົ່ງເສີມການຕອບແທນບຸນຄຸນ | |
| ຄະແນນລວມ:........................................ | | |
| ຄະແນນສະເລ່ຍ:.................................% | | |

ໝາຍເຫດ: ວິທີຄິດໄລ່ຄະແນນ: ຄະແນນລວມ X 100 ຫານ 28 = ..........%

ທີ.............................,ວັນທີ..........................

ຄະນະກຳມະການ — ອົງການປົກຄອງບ້ານ

1..............................................

2............................................

3............................................

4............................................

5............................................

VI. ການຍ້ອງຍໍ

ການຍ້ອງຍໍ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ຄອບຄົວວັດທະນະທໍາ, ບ້ານວັດທະນະທໍາ ທີ່ມີຜົນງານໃນການປະກອບສ່ວນ ແລະ ເຄື່ອນໄຫວວຽກງານສ້າງຄອບຄົວ ແລະ ບ້ານ ວັດທະນະທໍາ; ຄອບຄົວ ແລະ ບ້ານວັດທະນະທໍາ ທີ່ຮັກສານາມມະຍົດໄວ້ໄດ້ ໃຫ້ປະຕິບັດຕາມເງື່ອນໄຂທີ່ກໍານົດໄວ້ໃນບົດແນະນໍາ ສະບັບເລກທີ ............/ຖວທ, ລົງວັນທີ........./........./2021

ລັດຖະມົນຕີ

ສວນສະຫວັນ ວິຍະເກດ